ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 137 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍພະນັກງານໄອຍະການ

- ອີງຕາມ ມາດຕາ 68 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍພະນັກງານໄອຍະການ ສະບັບເລກທີ 156/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 34/ຄປຈ, ລົງວັນທີ 23 ກໍລະກົດ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍພະນັກງານໄອຍະການ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 156 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 25

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍພະນັກງານໄອຍະການ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025 ມາດຕາ 54 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 56/ສພຊ, ລົງວັນທີ 28 ມິຖຸນາ 2024 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍພະນັກງານໄອຍະການ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 16 ມິຖຸນາ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 25 ມິຖຸນາ 2025.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍພະນັກງານໄອຍະການ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 80 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2025

# ກົດໝາຍ
# ວ່າດ້ວຍພະນັກງານໄອຍະການ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການເຄື່ອນໄຫວ, ການແຕ່ງຕັ້ງ, ການເລື່ອນຂັ້ນ, ການປົດຂັ້ນ, ການຍົກຍ້າຍ ແລະ ການສັບປ່ຽນບ່ອນປະຈຳການ ຂອງພະນັກງານໄອຍະການ, ການປະຕິບັດນະໂຍບາຍ, ການຕິດຕາມກວດກາ ແລະ ການປະເມີນຜົນ ເພື່ອເຮັດໃຫ້ພະນັກງານໄອຍະການ ມີຄວາມຈົງຮັກພັກດີ, ມີຄຸນສົມບັດ ສິນທຳປະຕິວັດ, ມີຄວາມສັດຊື່ບໍລິສຸດ, ມີຈັນຍາບັນ, ຈັນຍາທຳ ແນໃສ່ຮັບປະກັນ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ ແລະ ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ, ອົງການປະຕິບັດຄຳຕັດສີນຂອງສານ ໃຫ້ມີຄວາມ ວ່ອງໄວ, ໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ, ພາວະວິໄສ, ປະກອບສ່ວນເຮັດໃຫ້ສັງຄົມ ມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

### ມາດຕາ 2 ພະນັກງານໄອຍະການ

ພະນັກງານໄອຍະການ ແມ່ນ ຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ ຕິດຕາມກວດກາ, ສອບສວນ ແລະ ເຂົ້າຮ່ວມປະຊຸມສານ ຕາມກົດໝາຍ ແລະ ຕາມການມອບໝາຍ.

ພະນັກງານໄອຍະການ ມີ ພະນັກງານໄອຍະການປະຊາຊົນ ແລະ ພະນັກງານໄອຍະການທະຫານ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ຄະນະກຳມະການ** ໝາຍເຖິງ ຄະນະກຳມະການສອບເສັງ, ຄະນະກຳມະການປະເມີນຜົນ, ຄະນະກຳມະການປະເມີນຜົນງານ ແລະ ຄະນະກຳມະການຕິດຕາມກວດກາ;

**2. ການປະເມີນຜົນ** ໝາຍເຖິງ ການປະເມີນການປະຕິບັດໜ້າທີ່ຂອງພະນັກງານໄອຍະການ ທີ່ດຳລົງຕຳແໜ່ງບໍລິຫານ ປະເພດ 2 ເພື່ອພິຈາລະນາແຕ່ງຕັ້ງ ເປັນພະນັກງານໄອຍະການ ຂັ້ນ I;

**3. ການປະເມີນຜົນງານ** ໝາຍເຖິງ ການປະເມີນການເຄື່ອນໄຫວວຽກງານປະຈຳປີ ຂອງພະນັກງານໄອຍະການ ເພື່ອປະຕິບັດນະໂຍບາຍຕາມກົດໝາຍ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານພະນັກງານໄອຍະການ**

ລັດ ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານ ແລະ ການປະຕິບັດໜ້າທີ່ ຂອງພະນັກງານໄອຍະການ ດ້ວຍການວາງນະໂຍບາຍ, ກົດໝາຍ, ລະບຽບການ ເພື່ອເຮັດໃຫ້ພະນັກງານໄອຍະການ ໄດ້ຮັບການພັດທະນາທາງດ້ານ ການເມືອງ, ແນວຄິດ, ຈັນຍາບັນ, ຈັນຍາທຳ, ຄວາມຮູ້, ວິຊາສະເພາະ, ພາສາຕ່າງປະເທດ ແລະ ການອຸດໜູນຢ່າງເໝາະສົມ, ຍົກສູງຊີວິດການເປັນຢູ່, ຮັບປະກັນ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ມີຄວາມໂປ່ງໃສ, ຄົບຖ້ວນ, ພາວະວິໄສ, ຍຸຕິທຳ ແລະ ຖືກຕ້ອງ ຕາມກົດໝາຍ.

**ມາດຕາ 5 ຫຼັກການເຄື່ອນໄຫວວຽກງານພະນັກງານໄອຍະການ**

ການເຄື່ອນໄຫວວຽກງານພະນັກງານໄອຍະການ ໃຫ້ຮັບປະກັນຫຼັກການ ດັ່ງນີ້:

1. ຖືກຕ້ອງ, ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ນະໂຍບາຍຂອງລັດ;
2. ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບ ກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
3. ສ້າງ ແລະ ພັດທະນາ ພະນັກງານໄອຍະການໃຫ້ມີຄຸນນະພາບ;
4. ເດັດຂາດ, ໂປ່ງໃສ, ວ່ອງໄວ, ຍຸຕິທຳ, ເປີດເຜີຍ, ພາວະວິໄສ ແລະ ສາມາດກວດສອບໄດ້;
5. ມີຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວບັນດາເຜົ່າ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ພະນັກງານໄອຍະການ, ຄະນະກຳມະການ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານໄອຍະການ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພະນັກງານໄອຍະການ ດ້ວຍການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ, ການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານພະນັກງານໄອຍະການ ໃຫ້ມີຄຸນນະພາບ ແລະ ຮັບປະກັນຄວາມຍຸຕິທຳ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ຂັ້ນ, ມາດຕະຖານ, ການສອບເສັງ ແລະ ການປະເມີນຜົນ ພະນັກງານໄອຍະການ

### ໝວດທີ 1
### ຂັ້ນ ພະນັກງານໄອຍະການ

**ມາດຕາ 8 ຂັ້ນພະນັກງານໄອຍະການ**

ພະນັກງານໄອຍະການ ມີ ສາມຂັ້ນ ດັ່ງນີ້:

1. ພະນັກງານໄອຍະການ ຂັ້ນ I;
2. ພະນັກງານໄອຍະການ ຂັ້ນ II;
3. ພະນັກງານໄອຍະການ ຂັ້ນ III.

ນອກຈາກ ພະນັກງານໄອຍະການ ແຕ່ລະຂັ້ນແລ້ວ ຍັງມີຜູ້ຊ່ວຍພະນັກງານໄອຍະການ.

**ມາດຕາ 9 ພະນັກງານໄອຍະການ ຂັ້ນ I**

ພະນັກງານໄອຍະການ ຂັ້ນ I ແມ່ນ ພະນັກງານໄອຍະການ ທີ່ມີຕໍາແໜ່ງບໍລິຫານປະເພດ 2 ທີ່ໄດ້ຮັບການແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມມາດຕະຖານ ທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ແລະ ມາດຕາ 14 ຂອງກົດໝາຍສະບັບນີ້ ພາຍຫຼັງໄດ້ຜ່ານການປະເມີນຜົນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

**ມາດຕາ 10 ພະນັກງານໄອຍະການ ຂັ້ນ II**

ພະນັກງານໄອຍະການ ຂັ້ນ II ແມ່ນ ພະນັກງານໄອຍະການ ຂັ້ນ III ທີ່ໄດ້ຮັບການແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ແລະ ມາດຕາ 15 ຂອງກົດໝາຍສະບັບນີ້ ພາຍຫຼັງໄດ້ຜ່ານການສອບເສັງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

**ມາດຕາ 11 ພະນັກງານໄອຍະການ ຂັ້ນ III**

ພະນັກງານໄອຍະການ ຂັ້ນ III ແມ່ນ ພະນັກງານໄອຍະການ ທີ່ໄດ້ຮັບການແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນ ສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ແລະ ມາດຕາ 16 ຂອງກົດໝາຍສະບັບນີ້ ພາຍຫຼັງໄດ້ຜ່ານການສອບເສັງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

**ມາດຕາ 12 ຜູ້ຊ່ວຍພະນັກງານໄອຍະການ**

ຜູ້ຊ່ວຍພະນັກງານໄອຍະການ ແມ່ນ ພະນັກງານວິຊາການກົດໝາຍ ຂອງອົງການໄອຍະການປະຊາຊົນ ທີ່ໄດ້ຮັບການແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ແລະ ມາດຕາ 17 ຂອງກົດໝາຍສະບັບນີ້ ພາຍຫຼັງໄດ້ຜ່ານການສອບເສັງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ມາດຕະຖານ ພະນັກງານໄອຍະການ

**ມາດຕາ 13 ມາດຕະຖານລວມ ຂອງພະນັກງານໄອຍະການ**

ພະນັກງານໄອຍະການ ມີມາດຕະຖານລວມ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກໍາເນີດ, ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;
2. ມີ ຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້ ຄວາມສາມາດ, ມີແບບແຜນນໍາພາ ແລະ ວິທີເຮັດວຽກ, ມີ ຈັນຍາບັນ, ຈັນຍາທໍາ, ຄວາມສັດຊື່ບໍລິສຸດ ໃນການປະຕິບັດໜ້າທີ່ຂອງຕົນ;
3. ມີລະດັບການສຶກສາດ້ານກົດໝາຍ ແຕ່ຊັ້ນສູງຂຶ້ນໄປ, ໄດ້ຝຶກອົບຮົມວຽກງານໄອຍະການ ແລະ ມີລະດັບທິດສະດີການເມືອງ ແລະ ການປົກຄອງ;
4. ຮູ້ພາສາຕ່າງປະເທດໃດໜຶ່ງ;
5. ສາມາດນໍາໃຊ້ຄອມພິວເຕີ;
6. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ຍ້ອນການກະທໍາຜິດ ໂດຍເຈດຕະນາ;
7. ມີສຸຂະພາບດີ.

ສໍາລັບ ມາດຕະຖານລວມ ຂອງຜູ້ຊ່ວຍພະນັກງານໄອຍະການ ກໍໃຫ້ປະຕິບັດຕາມມາດຕານີ້.

ນອກຈາກມາດຕະຖານລວມ ຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ແລ້ວ ຍັງມີມາດຕະຖານສະເພາະ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 14, 15, 16 ແລະ ມາດຕາ 17 ຂອງກົດໝາຍສະບັບນີ້.

**ມາດຕາ 14 ມາດຕະຖານພະນັກງານໄອຍະການ ຂັ້ນ I**

ພະນັກງານໄອຍະການ ຂັ້ນ I ມີມາດຕະຖານ ດັ່ງນີ້:

1. ມີລະດັບທິດສະດີການເມືອງ ແລະ ການປົກຄອງ ຂັ້ນສູງ;
2. ມີຄວາມຊໍານານງານ, ມີຫົວຄິດປະດິດສ້າງໃນການ ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ;
3. ສາມາດໃຫ້ ຄໍາແນະນໍາ, ຄໍາເຫັນ ທາງດ້ານກົດໝາຍ, ສະຫຼຸບຕີລາຄາຂໍ້ມູນກ່ຽວກັບຄະດີ;
4. ເປັນພະນັກງານທີ່ມີຕໍາແໜ່ງບໍລິຫານ ປະເພດ 2 ຂຶ້ນໄປ;
5. ໄດ້ຜ່ານການປະເມີນຜົນ ຈາກຄະນະກໍາມະການປະເມີນຜົນ.

**ມາດຕາ 15 ມາດຕະຖານພະນັກງານໄອຍະການ ຂັ້ນ II**

ພະນັກງານໄອຍະການ ຂັ້ນ II ມີມາດຕະຖານ ດັ່ງນີ້:

1. ມີລະດັບທິດສະດີການເມືອງ ແລະ ການປົກຄອງ ຂັ້ນກາງຂຶ້ນໄປ;
2. ມີຄວາມຊໍານານງານ, ມີຫົວຄິດປະດິດສ້າງ ໃນການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ;
3. ສາມາດໃຫ້ຄໍາແນະນໍາ, ຄໍາເຫັນທາງດ້ານກົດໝາຍ, ສະຫຼຸບຕີລາຄາຂໍ້ມູນກ່ຽວກັບຄະດີ;
4. ເປັນພະນັກງານໄອຍະການ ຂັ້ນ III ມາແລ້ວ ສາມປີ ຂຶ້ນໄປ ແລະ ເປັນພະນັກງານທີ່ມີຕໍາແໜ່ງບໍລິຫານ ປະເພດ 3;
5. ໄດ້ຜ່ານການສອບເສັງ ຈາກຄະນະກໍາມະການສອບເສັງ.

**ມາດຕາ 16 ມາດຕະຖານພະນັກງານໄອຍະການ ຂັ້ນ III**

ພະນັກງານໄອຍະການ ຂັ້ນ III ມີມາດຕະຖານ ດັ່ງນີ້:

1. ມີລະດັບທິດສະດີການເມືອງ ແລະ ການປົກຄອງ ຂັ້ນຕົ້ນຂຶ້ນໄປ;
2. ມີຄວາມສາມາດ ໃນການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ;
3. ສາມາດໃຫ້ ຄໍາແນະນໍາ, ຄໍາເຫັນທາງດ້ານກົດໝາຍ, ສະຫຼຸບຕີລາຄາຂໍ້ມູນກ່ຽວກັບຄະດີ;
4. ເປັນຜູ້ຊ່ວຍພະນັກງານໄອຍະການມາແລ້ວ ສາມປີ ຂຶ້ນໄປ;
5. ໄດ້ຜ່ານການສອບເສັງ ຈາກຄະນະກໍາມະການສອບເສັງ.

**ມາດຕາ 17 ມາດຕະຖານຜູ້ຊ່ວຍພະນັກງານໄອຍະການ**

ຜູ້ຊ່ວຍພະນັກງານໄອຍະການ ມີມາດຕະຖານ ດັ່ງນີ້:

1. ມີລະດັບທິດສະດີການເມືອງ ແລະ ການປົກຄອງ ຂັ້ນຕົ້ນຂຶ້ນໄປ;
2. ມີຄວາມສາມາດ ໃນການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ;
3. ສາມາດໃຫ້ ຄໍາແນະນໍາ, ຄໍາເຫັນທາງດ້ານກົດໝາຍ, ສະຫຼຸບຕີລາຄາຂໍ້ມູນກ່ຽວກັບຄະດີ;
4. ເປັນພະນັກງານວິຊາການກົດໝາຍ ທີ່ໄດ້ປະຕິບັດວຽກງານໄອຍະການມາແລ້ວ ສີ່ປີ ຂຶ້ນໄປ;
5. ໄດ້ຜ່ານການສອບເສັງ ຈາກຄະນະກໍາມະການສອບເສັງ.

## ໝວດທີ 3
## ການສອບເສັງ

**ມາດຕາ 18 ການສອບເສັງເປັນພະນັກງານໄອຍະການ**

ການສອບເສັງເປັນພະນັກງານໄອຍະການ ແມ່ນ ການວັດລະດັບ ຄວາມຮູ້, ຄວາມສາມາດ ແລະ ທັກສະຂອງພະນັກງານໄອຍະການ ໃນການປະຕິບັດໜ້າທີ່ ເພື່ອເລື່ອນຂັ້ນ.

ການສອບເສັງເປັນພະນັກງານໄອຍະການ ມີ ດັ່ງນີ້:

1. ການສອບເສັງ ເປັນພະນັກງານໄອຍະການ ຂັ້ນ II;
2. ການສອບເສັງ ເປັນພະນັກງານໄອຍະການ ຂັ້ນ III;
3. ການສອບເສັງ ເປັນຜູ້ຊ່ວຍພະນັກງານໄອຍະການ.

ສຳລັບ ເນື້ອໃນ, ຂັ້ນຕອນ ແລະ ວິທີ ການສອບເສັງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 ການຄັດເລືອກເຂົ້າສອບເສັງ**

ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ຫຼື ພະນັກງານອົງການໄອຍະການທະຫານ ມີສິດໄດ້ຮັບການເຂົ້າສອບເສັງ ຕາມການຕົກລົງຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ບົນພື້ນຖານການຄັດເລືອກ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນ ມາດຕາ 13, 15, 16 ແລະ ມາດຕາ 17 ຂອງກົດໝາຍສະບັບນີ້.

ສຳລັບ ເນື້ອໃນ, ຂັ້ນຕອນ ແລະ ວິທີການ ຄັດເລືອກເຂົ້າສອບເສັງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ຄະນະກຳມະການສອບເສັງ**

ຄະນະກຳມະການສອບເສັງ ມີ ຄະນະກຳມະການສອບເສັງຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຄະນະກຳມະການສອບເສັງຂອງອົງການໄອຍະການທະຫານຂັ້ນສູງ.

ຄະນະກຳມະການສອບເສັງຂອງອົງການໄອຍະການປະຊາຊົນສູງສຸດ ຊຶ່ງຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຫົວໜ້າ;
2. ຫົວໜ້າ ຫຼື ຮອງຫົວໜ້າກົມຈັດຕັ້ງ-ພະນັກງານ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຮອງຫົວໜ້າ;
3. ຫົວໜ້າ ຫຼື ຮອງຫົວໜ້າ ຫ້ອງການ, ກົມ ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ທີ່ກ່ຽວຂ້ອງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ;
4. ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຊ່ວຍວຽກ.

ຄະນະກຳມະການສອບເສັງຂອງອົງການໄອຍະການທະຫານຂັ້ນສູງ ຊຶ່ງຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນຫົວໜ້າ;
2. ຮອງຫົວໜ້າກົມພະນັກງານ ກົມໃຫຍ່ການເມືອງກອງທັບ ເປັນຮອງຫົວໜ້າ;
3. ຫົວໜ້າ ຫຼື ຮອງຫົວໜ້າ ຫ້ອງທີ່ກ່ຽວຂ້ອງ ຂອງອົງການໄອຍະການທະຫານຂັ້ນສູງ ເປັນກຳມະການ;
4. ພະນັກງານວິຊາການ ທີ່ກ່ຽວຂ້ອງຈຳນວນໜຶ່ງ ຂອງອົງການໄອຍະການທະຫານຂັ້ນສູງ ເປັນຜູ້ຊ່ວຍວຽກ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສອບເສັງ**

ຄະນະກຳມະການສອບເສັງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າເນື້ອໃນ ແລະ ອອກຫົວຂໍ້ສອບເສັງ;
2. ດຳເນີນການ ສອບເສັງ, ກວດບົດສອບເສັງ ແລະ ໃຫ້ຄະແນນ;
3. ພິຈາລະນາຮັບຮອງຜົນການສອບເສັງ;

4. ສັງລວມ ແລະ ລາຍງານ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ແລະ ປະກາດຜົນການສອບເສັງ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

## ໝວດທີ 4
## ການປະເມີນຜົນເປັນພະນັກງານໄອຍະການ ຂັ້ນ I

### ມາດຕາ 22 ການປະເມີນຜົນເປັນພະນັກງານໄອຍະການ ຂັ້ນ I

ການປະເມີນຜົນເປັນພະນັກງານໄອຍະການ ຂັ້ນ I ແມ່ນ ການຕີລາຄາການປະຕິບັດໜ້າທີ່ ຂອງພະນັກງານທີ່ດໍາລົງຕໍາແໜ່ງບໍລິຫານ ປະເພດ II ຂຶ້ນໄປ ເພື່ອພິຈາລະນາແຕ່ງຕັ້ງເປັນພະນັກງານໄອຍະການ ຂັ້ນ I.

ສ່ວນ ເນື້ອໃນ, ຂັ້ນຕອນ ແລະ ວິທີການ ປະເມີນຜົນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 23 ຄະນະກໍາມະການປະເມີນຜົນ

ຄະນະກໍາມະການປະເມີນຜົນ ມີ ຄະນະກໍາມະການປະເມີນຜົນຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຄະນະກໍາມະການປະເມີນຜົນຂອງອົງການໄອຍະການທະຫານຂັ້ນສູງ.

ຄະນະກໍາມະການປະເມີນຜົນຂອງອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຫົວໜ້າ;
2. ຫົວໜ້າກົມຈັດຕັ້ງ-ພະນັກງານ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຮອງຫົວໜ້າ;
3. ຫົວໜ້າ ຫ້ອງການ, ກົມ ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ທີ່ກ່ຽວຂ້ອງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນກໍາມະການ;
4. ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງຈໍານວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຊ່ວຍວຽກ.

ຄະນະກໍາມະການປະເມີນຜົນ ຂອງອົງການໄອຍະການທະຫານຂັ້ນສູງ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ຊຶ່ງປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ເປັນຫົວໜ້າ;
2. ຮອງຫົວໜ້າກົມພະນັກງານ ກົມໃຫຍ່ການເມືອງກອງທັບ ເປັນຮອງຫົວໜ້າ;
3. ຫົວໜ້າ ຫຼື ຮອງຫົວໜ້າ ຫ້ອງ ທີ່ກ່ຽວຂ້ອງ ຂອງອົງການໄອຍະການທະຫານຂັ້ນສູງ ເປັນກໍາມະການ;
4. ພະນັກງານວິຊາການ ທີ່ກ່ຽວຂ້ອງຈໍານວນໜຶ່ງ ຂອງອົງການໄອຍະການທະຫານຂັ້ນສູງ ເປັນຜູ້ຊ່ວຍວຽກ.

### ມາດຕາ 24 ສິດ ແລະ ໜ້າທີ່ ຂອງຄະນະກໍາມະການປະເມີນຜົນ

ຄະນະກໍາມະການປະເມີນຜົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ກ່ຽວກັບການປະເມີນຜົນ ພະນັກງານທີ່ມີຕໍາແໜ່ງບໍລິຫານ ປະເພດ 2 ຂຶ້ນໄປ ທີ່ຈະຖືກແຕ່ງຕັ້ງ ເປັນພະນັກງານໄອຍະການ ຂັ້ນ I;
2. ດໍາເນີນ ແລະ ລາຍງານ ການປະເມີນຜົນ ຕໍ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເພື່ອນໍາສະເໜີຄະນະກໍາມະການໄອຍະການປະຊາຊົນສູງສຸດ ຫຼື ຄະນະກໍາມະການໄອຍະການທະຫານຂັ້ນສູງ ພິຈາລະນາຮັບຮອງ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

## ພາກທີ III
## ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການ

### ມາດຕາ 25 ສິດ ແລະ ໜ້າທີ່ລວມ ຂອງພະນັກງານໄອຍະການ

ພະນັກງານໄອຍະການ ມີ ສິດ ແລະ ໜ້າທີ່ ລວມ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;
2. ດຳເນີນການສອບສວນຄະດີ;
3. ເອົາຄຳໃຫ້ການຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
4. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ;
5. ເຂົ້າຮ່ວມການດຳເນີນຄະດີກັບເຈົ້າໜ້າທີ່ສືບສວນ-ສອບສວນ;
6. ຄົ້ນຄວ້າ, ສະຫຼຸບ ສັງລວມ ຄະດີ, ຄຳຕົກລົງ ຂອງຫົວໜ້າອົງການໄອຍະການປະຊາຊົນ;
7. ເຂົ້າຮ່ວມປະຊຸມສານ ແລະ ຖະແຫຼງໃນທີ່ປະຊຸມສານ;
8. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;
9. ຕິດຕາມກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ ແລະ ຄ້າຍຄຸມຂັງ;
10. ໄດ້ຮັບການ ບຳລຸງ, ຍົກລະດັບ ກ່ຽວກັບວຽກງານໄອຍະການ;
11. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຫົວໜ້າອົງການໄອຍະການປະຊາຊົນ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ.

### ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການ ຂັ້ນ I

ພະນັກງານໄອຍະການ ຂັ້ນ I ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ຄຳແນະນຳທາງດ້ານກົດໝາຍ;
2. ນຳໃຊ້ວິທີການສືບສວນ-ສອບສວນ ໃນການດຳເນີນຄະດີອາຍາຕາມການມອບໝາຍ, ເອົາຄຳໃຫ້ການ ແລະ ປະກອບຫຼັກຖານໃນຄະດີ ປົກຄອງ, ແພ່ງ ທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່, ສັງຄົມ, ສິດ ແລະ ຜົນປະໂຫຍດຂອງ ເດັກ ແລະ ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ແຈ້ງ ຂໍ້ກ່າວຫາ, ສິດ ແລະ ພັນທະ ໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ;
4. ເຊັນຄຳຖະແຫຼງຄະດີອາຍາ ກ່ຽວກັບການກະທຳຜິດໃນສະຖານ ຄະຣຸໂທດ ແລະ ການກະທຳຜິດໃນສະຖານອື່ນ, ຄຳຖະແຫຼງຄະດີ ແພ່ງ, ປົກຄອງ ແລະ ຄະດີອື່ນ ແລະ ເຂົ້າຮ່ວມປະຊຸມສານ ຕາມການແຕ່ງຕັ້ງ ຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ, ຕິດຕາມການໄຕ່ສວນຄະດີຢູ່ທີ່ປະຊຸມສານໃຫ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ;
5. ຕິດຕາມກວດກາ ສູນດັດສ້າງສຳລັບເດັກກະທຳຜິດ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ;
6. ດຳເນີນການສືບສວນ-ສອບຖາມ ຄະດີເດັກກະທຳຜິດ, ສຳພາດເດັກຜູ້ຖືກເຄາະຮ້າຍ ແລະ ເດັກ ທີ່ເປັນພະຍານ;

7. ລົງລາຍເຊັນ ໃນ ໝາຍຮຽກ, ໝາຍເຊີນ ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ຜູ້ຖືກຫາ, ຈຳເລີຍ ແລະ ພະຍານ ເຂົ້າມາໃຫ້ການ, ປະເດັນ, ແຈ້ງຕອບ ແລະ ບົດສະຫຼຸບຄະດີ ທີ່ຕົນຮັບຜິດຊອບ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການ ຂັ້ນ II**

ພະນັກງານໄອຍະການ ຂັ້ນ II ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ຄຳແນະນຳທາງດ້ານກົດໝາຍ;

2. ນຳໃຊ້ວິທີການສືບສວນ-ສອບສວນ ໃນການດຳເນີນຄະດີອາຍາ ຕາມການມອບໝາຍ, ເອົາຄຳໃຫ້ການ ແລະ ປະກອບຫຼັກຖານ ໃນຄະດີ ປົກຄອງ, ແພ່ງ ທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່, ສັງຄົມ, ສິດ ແລະ ຜົນປະໂຫຍດຂອງ ເດັກ ແລະ ບຸກຄົນອື່ນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;

3. ແຈ້ງຂໍ້ກ່າວຫາ, ສິດ ແລະ ພັນທະ ໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ;

4. ເຊັນຄຳຖະແຫຼງຄະດີອາຍາ ກ່ຽວກັບການກະທຳຜິດໃນສະຖານ ລະຫຸໂທດ ແລະ ໂທສານຸໂທດ, ຄຳຖະແຫຼງຄະດີ ແພ່ງ, ປົກຄອງ ແລະ ຄະດີອື່ນ ແລະ ເຂົ້າຮ່ວມປະຊຸມສານ ຕາມການແຕ່ງຕັ້ງຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ, ຕິດຕາມການໄຕ່ສວນຄະດີຢູ່ທີ່ປະຊຸມສານໃຫ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ;

5. ຕິດຕາມກວດກາ ສູນດັດສ້າງສຳລັບເດັກກະທຳຜິດ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ;

6. ດຳເນີນການສືບສວນ-ສອບຖາມ ຄະດີເດັກກະທຳຜິດ, ສຳພາດເດັກຜູ້ຖືກເຄາະຮ້າຍ ແລະ ເດັກ ທີ່ເປັນພະຍານ;

7. ລົງລາຍເຊັນໃນໝາຍຮຽກ, ໝາຍເຊີນ ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ຜູ້ຖືກຫາ, ຈຳເລີຍ ແລະ ພະຍານ ເຂົ້າມາໃຫ້ການ, ປະເດັນ, ແຈ້ງຕອບ, ສະໂນດນຳສົ່ງ ແລະ ບົດສະຫຼຸບຄະດີທີ່ຕົນຮັບຜິດຊອບ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການ ຂັ້ນ III**

ພະນັກງານໄອຍະການ ຂັ້ນ III ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສຳນວນຄະດີ ແລະ ຮ່າງຄຳຕົກລົງ ຂອງຫົວໜ້າອົງການໄອຍະການປະຊາຊົນ;

2. ເຂົ້າຮ່ວມປະຊຸມສານ ຕາມການແຕ່ງຕັ້ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ, ຕິດຕາມການໄຕ່ສວນຄະດີຢູ່ທີ່ປະຊຸມສານ ໃຫ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ;

3. ເຊັນຄຳຖະແຫຼງກ່ຽວກັບການກະທຳຜິດທາງອາຍາ ໃນສະຖານ ລະຫຸໂທດ;

4. ລົງລາຍເຊັນ ໃນ ໝາຍຮຽກ, ໝາຍເຊີນ ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ຜູ້ຖືກຫາ, ຈຳເລີຍ ແລະ ພະຍານ ເຂົ້າມາໃຫ້ການ, ປະເດັນ, ແຈ້ງຕອບ, ສະໂນດນຳສົ່ງ ແລະ ບົດສະຫຼຸບຄະດີທີ່ຕົນຮັບຜິດຊອບ ຕາມການມອບໝາຍຂອງພະນັກງານໄອຍະການ ຂັ້ນ I ຫຼື ຂັ້ນ II;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍພະນັກງານໄອຍະການ**

ຜູ້ຊ່ວຍພະນັກງານໄອຍະການ ມີ ສິດ ແລະ ໜ້າທີ່ ຕາມການມອບໝາຍຂອງພະນັກງານໄອຍະການ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;
2. ເຂົ້າຮ່ວມ ແລະ ບັນທຶກເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ຄົ້ນຄວ້າ, ສະຫຼຸບ ສຳນວນຄະດີ ແລະ ຮ່າງຄຳຕົກລົງ ຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ຫົວໜ້າອົງການໄອຍະການທະຫານ;
4. ໃສ່ເລກທີຄະດີ, ຈັດສຳນວນຄະດີ, ເຮັດບັນຊີເອກະສານ, ເກັບມ້ຽນ ແລະ ເຮັດສະຖິຕິສຳນວນ ຄະດີ;
5. ເຮັດ ບັນຊີ ແລະ ຕິດຕາມການເກັບມ້ຽນ ຂອງກາງຄະດີ;
6. ເຮັດ ບັນຊີ ແລະ ສະຖິຕິ ຜູ້ຖືກຫາ, ຜູ້ຖືກດັດສ້າງ ແລະ ນັກໂທດ;
7. ຮ່າງ ໝາຍຮຽກ, ໝາຍເຊີນ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ພາກທີ IV
## ການແຕ່ງຕັ້ງ, ການເລື່ອນຂັ້ນ, ການປົດຂັ້ນ, ການຍົກຍ້າຍ ແລະ ການສັບປ່ຽນບ່ອນປະຈຳການ ຂອງພະນັກງານໄອຍະການ

**ມາດຕາ 30 ການແຕ່ງຕັ້ງພະນັກງານໄອຍະການ**

ພະນັກງານໄອຍະການ ໄດ້ຮັບການແຕ່ງຕັ້ງ ດັ່ງນີ້:

1. ພະນັກງານວິຊາການກົດໝາຍ ເປັນຜູ້ຊ່ວຍພະນັກງານໄອຍະການ;
2. ຜູ້ຊ່ວຍພະນັກງານໄອຍະການ ເປັນພະນັກງານໄອຍະການ ຂັ້ນ III;
3. ພະນັກງານໄອຍະການ ຂັ້ນ III ເປັນພະນັກງານໄອຍະການ ຂັ້ນ II;
4. ພະນັກງານທີ່ມີຕຳແໜ່ງບໍລິຫານ ປະເພດ 2 ເປັນພະນັກງານໄອຍະການ ຂັ້ນ I.

ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ທີ່ມີມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ບົນພື້ນຖານການຮັບຮອງ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ.

ສຳລັບ ພະນັກງານໄອຍະການທະຫານ ແລະ ຜູ້ຊ່ວຍພະນັກງານໄອຍະການທະຫານ ທີ່ມີມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ບົນພື້ນຖານການຮັບຮອງຂອງຄະນະກຳມະການໄອຍະການທະຫານຂັ້ນສູງ.

**ມາດຕາ 31 ການເລື່ອນຂັ້ນ**

ພະນັກງານໄອຍະການ ແຕ່ລະຂັ້ນທີ່ມີມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຈະໄດ້ຮັບການເລື່ອນຂັ້ນໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ບົນພື້ນຖານການຮັບຮອງຂອງ ຄະນະກຳມະການໄອຍະການປະຊາຊົນສູງສຸດ ຫຼື ຄະນະກຳມະການໄອຍະການທະຫານຂັ້ນສູງ.

**ມາດຕາ 32 ການປົດຂັ້ນພະນັກງານໄອຍະການ**

ພະນັກງານໄອຍະການ ແຕ່ລະຂັ້ນ ທີ່ມີພຶດຕິກຳ ເປັນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້ ຈະຖືກປົດຂັ້ນໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

**ມາດຕາ 33 ການຍົກຍ້າຍພະນັກງານໄອຍະການ**

ພະນັກງານໄອຍະການ ຈະຖືກຍົກຍ້າຍໄປຮັບໜ້າທີ່ໃໝ່ໃນຂະແໜງການອື່ນ ຕາມການຕົກລົງຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

**ມາດຕາ 34 ການສັບປ່ຽນບ່ອນປະຈຳການຂອງພະນັກງານໄອຍະການ**

ພະນັກງານໄອຍະການ ໄດ້ຮັບການສັບປ່ຽນບ່ອນປະຈຳການ ພາຍໃນລະບົບອົງການໄອຍະການປະຊາຊົນ ຕາມການຕົກລົງຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

**ມາດຕາ 35 ການແຕ່ງຕັ້ງພະນັກງານ ທີ່ຍົກຍ້າຍມາຈາກຂະແໜງການອື່ນ ເປັນພະນັກງານໄອຍະການ**

ການແຕ່ງຕັ້ງພະນັກງານ ທີ່ຍົກຍ້າຍມາຈາກຂະແໜງການອື່ນ ເປັນພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໃຫ້ປະຕິບັດຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

## ພາກທີ V
## ຈັນຍາບັນ, ຈັນຍາທຳ ແລະ ການຝຶກອົບຮົມ
### ໝວດທີ 1
### ຈັນຍາບັນ ແລະ ຈັນຍາທຳ ຂອງພະນັກງານໄອຍະການ

**ມາດຕາ 36 ຈັນຍາບັນຂອງພະນັກງານໄອຍະການ**

ພະນັກງານໄອຍະການ ຕ້ອງມີຈັນຍາບັນ ໃນການປະຕິບັດໜ້າທີ່ຂອງຕົນ ດ້ວຍຄວາມ ສັດຊື່, ບໍລິສຸດ ຜຸດຜ່ອງ, ບໍ່ລຳອຽງ, ເປັນທຳ, ເປັນມືອາຊີບ, ໄດ້ຮັບຄວາມໄວ້ວາງໃຈ, ເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 37 ຈັນຍາທຳຂອງພະນັກງານໄອຍະການ**

ພະນັກງານໄອຍະການ ຕ້ອງມີຈັນຍາທຳ ໃນການໃຫ້ຄວາມຍຸຕິທຳແກ່ຄູ່ຄວາມ, ປະຕິບັດໜ້າທີ່ດ້ວຍຄວາມສັດຊື່ບໍລິສຸດ, ທ່ຽງທຳ, ຖືກຕ້ອງຕາມ ກົດໝາຍ, ເຫດການຕົວຈິງຂອງຄະດີ ແລະ ຕ້ອງປະຕິບັດໜ້າທີ່ຢ່າງເຂັ້ມງວດ, ຮອບຄອບ, ຄົບຖ້ວນ, ພາວະວິໄສ, ມີການປະພຶດດີ ແລະ ມີຄວາມອົດທົນສູງ, ຍຶດໝັ້ນ ໃນກຽດສັກສີຂອງອົງການໄອຍະການປະຊາຊົນ.

### ໝວດທີ 2
### ການຝຶກອົບຮົມ ພະນັກງານໄອຍະການ

**ມາດຕາ 38 ການຝຶກອົບຮົມ**

ການຝຶກອົບຮົມ ມີ ດັ່ງນີ້:

1. ການຝຶກອົບຮົມຂັ້ນພື້ນຖານ;
2. ການຝຶກອົບຮົມປົກກະຕິ;
3. ການຝຶກອົບຮົມສະເພາະ;
4. ການຝຶກອົບຮົມອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 39 ການຝຶກອົບຮົມຂັ້ນພື້ນຖານ**

ພະນັກງານວິຊາການກົດໝາຍ ອົງການໄອຍະການປະຊາຊົນ ທີ່ມີມາດຕະຖານ ຈະແຕ່ງຕັ້ງເປັນຜູ້ຊ່ວຍພະນັກງານໄອຍະການ ຕ້ອງໄດ້ຮັບການຝຶກອົບຮົມຂັ້ນພື້ນຖານ ກ່ຽວກັບ ຫຼັກສູດ, ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍພະນັກງານໄອຍະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 ການຝຶກອົບຮົມປົກກະຕິ**

ພະນັກງານໄອຍະການ ຕ້ອງໄດ້ຮັບການຝຶກອົບຮົມ ກ່ຽວກັບ ນິຕິກຳ, ກົດໝາຍ ທີ່ສ້າງໃໝ່ ຫຼື ປັບປຸງ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ການຝຶກອົບຮົມປົກກະຕິ ດຳເນີນ ຕາມແຜນການ ແລະ ຫຼັກສູດ ທີ່ໄດ້ກຳນົດໄວ້ ຊຶ່ງຈັດຂຶ້ນໂດຍ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ຂອງອົງການໄອຍະການປະຊາຊົນສູງສຸດ.

**ມາດຕາ 41 ການຝຶກອົບຮົມສະເພາະ**

ການຝຶກອົບຮົມສະເພາະ ຈັດຂຶ້ນ ເພື່ອພັດທະນາ ແລະ ຍົກສູງຄຸນນະພາບ ຂອງພະນັກງານໄອຍະການໃນການປະຕິບັດໜ້າທີ່ຂອງຕົນ ກ່ຽວກັບ ເນື້ອໃນ, ຫົວຂໍ້ ຫຼື ວຽກງານໄອຍະການ ໃດໜຶ່ງທີ່ຈຳເປັນ.

## ພາກທີ VI
## ເງິນເດືອນ ແລະ ເງິນອຸດໜູນ

**ມາດຕາ 42 ເງິນເດືອນຂອງພະນັກງານໄອຍະການ**

ເງິນເດືອນຂອງ ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບ ເງິນເດືອນຂອງ ພະນັກງານໄອຍະການທະຫານ ແລະ ຜູ້ຊ່ວຍພະນັກງານໄອຍະການທະຫານໃຫ້ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 43 ເງິນອຸດໜູນ ຂອງພະນັກງານໄອຍະການ**

ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ໄດ້ຮັບເງິນອຸດໜູນ ເທົ່າກັບເງິນອຸດໜູນຕຳແໜ່ງບໍລິຫານ ດັ່ງນີ້:

1. ພະນັກງານໄອຍະການ ຂັ້ນ I ເທົ່າກັບ ເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 2;
2. ພະນັກງານໄອຍະການ ຂັ້ນ II ເທົ່າກັບ ເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 3;
3. ພະນັກງານໄອຍະການ ຂັ້ນ III ເທົ່າກັບ ເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 4;
4. ຜູ້ຊ່ວຍພະນັກງານໄອຍະການ ເທົ່າກັບ ເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 5.

ສຳລັບ ເງິນອຸດໜູນ ຂອງພະນັກງານໄອຍະການທະຫານ ແລະ ຜູ້ຊ່ວຍພະນັກງານໄອຍະການທະຫານໃຫ້ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 44 ເງິນອຸດໜູນວິຊາຊີບ ຂອງພະນັກງານໄອຍະການ**

ພະນັກງານໄອຍະການ ໄດ້ຮັບເງິນອຸດໜູນວິຊາຊີບ ຕາມການຕົກລົງຂອງລັດຖະບານ.

## ພາກທີ VII
## ຂໍ້ຫ້າມ

### ມາດຕາ 45 ຂໍ້ຫ້າມສຳລັບພະນັກງານໄອຍະການ

ຫ້າມ ພະນັກງານໄອຍະການ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ ຫຼື ຍາດພີ່ນ້ອງ, ໝູ່ຄູ່, ພັກພວກ ຂອງຕົນ;

2. ນຳໃຊ້ສິດ, ປະຕິບັດໜ້າທີ່ ເກີນຂອບເຂດ ທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ບັງຄັບ, ນາບຂູ່ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ ຫຼື ປົກປ້ອງ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

5. ກັກສຳນວນຄະດີ, ກົດໜ່ວງ ຖ່ວງດຶງ ເອກະສານ ເພື່ອຫາຜົນປະໂຫຍດຈາກການດຳເນີນຄະດີ;

6. ທວງ, ຮຽກ, ຮັບ, ເອົາສິນບົນ ຈາກຄູ່ຄວາມ, ບຸກຄົນ ແລະ ການຈັດຕັ້ງ;

7. ພົວພັນກັບ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ ເພື່ອຫາຜົນປະໂຫຍດ;

8. ເຂົ້າຮ່ວມໃນການດຳເນີນຄະດີ ທີ່ພົວພັນກັບ ຜົວ, ເມຍ, ລູກ, ຍາດພີ່ນ້ອງ, ໝູ່ຄູ່ ພັກພວກ ຂອງຕົນ;

9. ປິດບັງ, ຊຸກເຊື່ອງ ເອກະສານ, ຫຼັກຖານ ທີ່ມີຢູ່ໃນສຳນວນຄະດີ, ນຳໃຊ້ ແລະ ເຮັດໃຫ້ ຂອງກາງໃນຄະດີ ເປ່ເພ ເສຍຫາຍ;

10. ເປີດເຜີຍຄວາມລັບຂອງລັດ ແລະ ທາງລັດຖະການ;

11. ສັກລາຍ, ບ່ອງຫູ, ໃສ່ຕຸ້ມຫູ ແລະ ມີພຶດຕິກຳອື່ນ ທີ່ເປັນການຂັດກັບຮີດຄອງປະເພນີອັນດີງາມຂອງຊາດ;

12. ນຸ່ງຖື, ໃສ່ເຄື່ອງປະດັບ ແລະ ມີມາລະຍາດ ທີ່ບໍ່ເໝາະສົມ;

13. ນຸ່ງເຄື່ອງແບບ ພະນັກງານໄອຍະການ ໂດຍບໍ່ຖືກຕ້ອງຕາມລະບຽບການ ຫຼື ນຸ່ງເຄື່ອງແບບເຂົ້າຮ້ານບັນເທີງ ແລະ ສະຖານທີ່ອື່ນທີ່ບໍ່ເໝາະສົມ;

14. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ສຳລັບ ຜູ້ຊ່ວຍພະນັກງານໄອຍະການ ກໍຫ້າມມີພຶດຕິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້.

### ມາດຕາ 46 ຂໍ້ຫ້າມສຳລັບຄະນະກຳມະການ

ຫ້າມ ຄະນະກຳມະການ ມີພຶດຕິກຳ ດັ່ງນີ້:

1. ລຳອຽງ, ເຂົ້າຂ້າງ ອອກຂາ, ບິດເບືອນ, ປົກປິດ ຂໍ້ມູນຄວາມຈິງ, ຮຽກຮ້ອງເອົາຜົນປະໂຫຍດ ຫຼື ຮັບສິນບົນ;

2. ແຊກແຊງ, ກ້າວກ່າຍ, ຂັດຂວາງ ການດຳເນີນຄະດີ;

3. ນາບຂູ່, ທຳຮ້າຍ ພະນັກງານໄອຍະການ;

4. ມີການກະທຳ ທີ່ພາໃຫ້ພະນັກງານໄອຍະການ ດຳເນີນຄະດີ ບໍ່ມີຄວາມເປັນທຳ;

5. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານໄອຍະການ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 47 ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານໄອຍະການ;

2. ປົກປິດ, ເຊື່ອງອຳ ຫຼື ທຳລາຍ ຂໍ້ມູນ, ຫຼັກຖານ ກ່ຽວກັບຄະດີ;

3. ນາບຂູ່ ຫຼື ທຳຮ້າຍ ພະນັກງານໄອຍະການ, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບຄະດີ;

4. ປົກປ້ອງ, ຊຸກເຊື່ອງ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມ ໃນຄະດີ;

5. ໃຫ້ສິນບົນ ພະນັກງານໄອຍະການ;

6. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານໄອຍະການ;

7. ກັກຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງຂອງ ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ;

8. ສັບປ່ຽນ, ປ່ຽນແປງ, ນຳໃຊ້ ຫຼື ເຮັດໃຫ້ ຂອງກາງ, ເອກະສານໃດໜຶ່ງ ໃນຄະດີ ເປ່ເພ, ເສຍຫາຍ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ, ການປົກປ້ອງ, ນະໂຍບາຍ ແລະ ການຍ້ອງຍໍ ພະນັກງານໄອຍະການ

### ໝວດທີ 1
### ການຄຸ້ມຄອງ ແລະ ການປົກປ້ອງ ພະນັກງານໄອຍະການ

**ມາດຕາ 48 ການຄຸ້ມຄອງພະນັກງານໄອຍະການ**

ພະນັກງານໄອຍະການ ຂັ້ນ I, ຂັ້ນ II, ຂັ້ນ III ແລະ ຜູ້ຊ່ວຍພະນັກງານໄອຍະການ ຂຶ້ນກັບສິດຄຸ້ມຄອງຂອງ ຄະນະກຳມະການໄອຍະການປະຊາຊົນສູງສຸດ ແລະ ຄະນະກຳມະການໄອຍະການທະຫານຂັ້ນສູງ.

ສຳລັບ ການຄຸ້ມຄອງພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 49 ການປົກປ້ອງພະນັກງານໄອຍະການ**

ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການບັງຄັບ, ນາບຂູ່ ແລະ ພຶດຕິກຳທີ່ເປັນອັນຕະລາຍຕໍ່ ຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນ ສ່ວນຕົວ ຫຼື ຂອງຄອບຄົວ.

### ໝວດທີ 2
### ນະໂຍບາຍ ແລະ ການຍ້ອງຍໍ ພະນັກງານໄອຍະການ

**ມາດຕາ 50 ນະໂຍບາຍ**

ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໄດ້ຮັບນະໂຍບາຍຈາກຜົນສຳເລັດ ໃນການເຄື່ອນໄຫວວຽກງານ ແລະ ການປະຕິບັດໜ້າທີ່ ຂອງຕົນ ດັ່ງນີ້:

1. ໄດ້ຮັບການເລື່ອນຂັ້ນ ແລະ ປະດັບຂັ້ນ ຕາມລະບຽບການ;
2. ໄດ້ຮັບ ເງິນເດືອນ, ເງິນອຸດໜູນ, ເງິນອຸດໜູນວິຊາຊີບ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 51 ການຍ້ອງຍໍ**

ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວວຽກງານ ແລະ ການປະຕິບັດໜ້າທີ່ ໄດ້ຮັບການຍ້ອງຍໍ ຕາມລະບຽບການ.

# ພາກທີ IX
# ການຕິດຕາມກວດກາ ແລະ ການປະເມີນຜົນງານ
# ຂອງພະນັກງານໄອຍະການ
## ໝວດທີ 1
## ການຕິດຕາມກວດກາ ພະນັກງານໄອຍະການ

### ມາດຕາ 52 ການຕິດຕາມກວດກາພະນັກງານໄອຍະການ

ການຕິດຕາມກວດກາ ພະນັກງານໄອຍະການ ແມ່ນ ການຕິດຕາມກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ທາງດ້ານວິຊາການ ແລະ ການປະພຶດຂອງ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໂດຍ ຄະນະກຳມະການຕິດຕາມກວດກາ ຂອງ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ.

### ມາດຕາ 53 ຄະນະກຳມະການຕິດຕາມກວດກາ

ຄະນະກຳມະການຕິດຕາມກວດກາ ມີ ຄະນະກຳມະການຕິດຕາມກວດກາ ຂອງ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ.

ຄະນະກຳມະການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນສູງສຸດ ຊຶ່ງຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຫົວໜ້າ;
2. ຫົວໜ້າກົມຈັດຕັ້ງ-ພະນັກງານ ເປັນຮອງຫົວໜ້າ;
3. ຫົວໜ້າກົມກວດກາ ເປັນກຳມະການ;
4. ຫົວໜ້າກົມທີ່ກ່ຽວຂ້ອງ ເປັນກຳມະການ;
5. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ເປັນກຳມະການ;
6. ພະນັກງານວິຊາການ ຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຊ່ວຍວຽກ.

ຄະນະກຳມະການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ ທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ:

1. ຫົວໜ້າອົງການໄອຍະການປະຊາຊົນ ເປັນຫົວໜ້າ;
2. ຫົວໜ້າຫ້ອງການ ອົງການໄອຍະການປະຊາຊົນ ເປັນຮອງຫົວໜ້າ;
3. ຫົວໜ້າຂະແໜງການ ອົງການໄອຍະການປະຊາຊົນ ເປັນກຳມະການ;
4. ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ອົງການໄອຍະການປະຊາຊົນ ເປັນກຳມະການ;
5. ພະນັກງານວິຊາການ ຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນ ເປັນຜູ້ຊ່ວຍວຽກ.

ຄະນະກຳມະການຕິດຕາມກວດກາ ຂອງອົງການໄອຍະການທະຫານ ຂັ້ນສູງ, ພາກ, ນະຄອນຫຼວງ, ແຂວງທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ປະກອບດ້ວຍ:

1. ຫົວໜ້າອົງການໄອຍະການທະຫານ ເປັນຫົວໜ້າ;
2. ຫົວໜ້າ ຫຼື ຮອງຫົວໜ້າ ຫ້ອງ, ພະແນກ ເປັນຮອງຫົວໜ້າ;
3. ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ອົງການໄອຍະການທະຫານ ເປັນກຳມະການ;
4. ພະນັກງານວິຊາການ ຈຳນວນໜຶ່ງ ຂອງອົງການໄອຍະການທະຫານ ເປັນຜູ້ຊ່ວຍວຽກ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງຄະນະກໍາມະການຕິດຕາມກວດກາ**

ຄະນະກໍາມະການຕິດຕາມກວດກາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າອອກນິຕິກໍາ ກ່ຽວກັບການຕິດຕາມກວດກາ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ;
2. ຕິດຕາມກວດກາ ການປະຕິບັດໜ້າທີ່ ແລະ ການປະພຶດ ຂອງ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ;
3. ຕີລາຄາ ການປະຕິບັດໜ້າທີ່ ແລະ ການປະພຶດ ຂອງ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ;
4. ລາຍງານຜົນການຕີລາຄາ ຕໍ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເພື່ອພິຈາລະນາຕົກລົງ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

**ມາດຕາ 55 ຮູບການການຕິດຕາມກວດກາ**

ການຕິດຕາມກວດກາ ມີ ສາມຮູບການ ດັ່ງນີ້:

1. ການຕິດຕາມກວດກາປົກກະຕິ ຊຶ່ງແມ່ນ ການຕິດຕາມ ກວດກາ ຕາມແຜນການ;
2. ການຕິດຕາມກວດກາບໍ່ປົກກະຕິ ຊຶ່ງແມ່ນ ການຕິດຕາມກວດກາ ເມື່ອເຫັນວ່າ ມີຄວາມຈໍາເປັນ ທີ່ຕ້ອງໄດ້ແຈ້ງໃຫ້ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ທີ່ຖືກກວດການັ້ນ ຮູ້ກ່ອນລ່ວງໜ້າ;
3. ການຕິດຕາມກວດກາກະທັນຫັນ ຊຶ່ງແມ່ນ ການຕິດຕາມກວດກາ ໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ພະນັກງານ ໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ທີ່ຖືກກວດການັ້ນ ຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການຕິດຕາມກວດກາ ນັ້ນ ຕ້ອງປະຕິບັດ ຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 2
## ການປະເມີນຜົນງານ ຂອງພະນັກງານໄອຍະການ

**ມາດຕາ 56 ການປະເມີນຜົນງານ ຂອງພະນັກງານໄອຍະການ**

ການປະເມີນຜົນງານ ຂອງພະນັກງານໄອຍະການ ແມ່ນ ການຕີລາຄາ ກ່ຽວກັບ ການປະຕິບັດໜ້າທີ່ ແລະ ການປະພຶດຂອງ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໂດຍຄະນະກໍາມະການປະເມີນຜົນງານ ເພື່ອຍ້ອງຍໍ ຫຼື ລົງວິໄນ.

**ມາດຕາ 57 ຄະນະກໍາມະການປະເມີນຜົນງານ**

ຄະນະກໍາມະການປະເມີນຜົນງານ ມີ ຄະນະກໍາມະການປະເມີນຜົນງານ ຂອງ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ.

ຄະນະກໍາມະການປະເມີນຜົນງານ ຂອງອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຫົວໜ້າ;
2. ຫົວໜ້າກົມຈັດຕັ້ງ-ພະນັກງານ ເປັນຮອງຫົວໜ້າ;
3. ຫົວໜ້າກົມກວດກາ ເປັນກໍາມະການ;
4. ຫົວໜ້າກົມ ທີ່ກ່ຽວຂ້ອງ ເປັນກໍາມະການ;
5. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ເປັນກໍາມະການ;
6. ພະນັກງານວິຊາການ ຈໍານວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຊ່ວຍວຽກ.

ຄະນະກຳມະການປະເມີນຜົນງານ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ ທີ່ກ່ຽວຂ້ອງ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ:

1. ຫົວໜ້າອົງການໄອຍະການປະຊາຊົນ ເປັນຫົວໜ້າ;
2. ຫົວໜ້າຫ້ອງການ ອົງການໄອຍະການປະຊາຊົນ ເປັນຮອງຫົວໜ້າ;
3. ຄະນະຈັດຕັ້ງ ຂັ້ນແຂວງ, ຂັ້ນເມືອງ ຫຼື ຕາແສງ ເປັນກຳມະການ;
4. ຄະນະກວດກາ ຂັ້ນແຂວງ, ຂັ້ນເມືອງ ຫຼື ຕາແສງ ເປັນກຳມະການ;
5. ຜູ້ຕາງໜ້າ ອົງການຈັດຕັ້ງມະຫາຊົນ ອົງການໄອຍະການປະຊາຊົນ ເປັນກຳມະການ;
6. ພະນັກງານວິຊາການ ຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນ ເປັນຜູ້ຊ່ວຍວຽກ.

ຄະນະກຳມະການປະເມີນຜົນງານ ຂອງອົງການໄອຍະການທະຫານ ຂັ້ນສູງ, ພາກ, ນະຄອນຫຼວງ, ແຂວງ ທີ່ກ່ຽວຂ້ອງ ຖືກແຕ່ງຕັ້ງໂດຍ ຫົວໜ້າອົງການໄອຍະການທະຫານຂັ້ນສູງ ປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການທະຫານ ເປັນຫົວໜ້າ;
2. ຮອງຫົວໜ້າ ກົມພະນັກງານ, ພະແນກ ພະນັກງານ ເປັນຮອງຫົວໜ້າ;
3. ຫົວໜ້າ ຫຼື ຮອງຫົວໜ້າ ຫ້ອງ, ພະແນກ ຂອງອົງການໄອຍະການທະຫານ ເປັນກຳມະການ;
4. ພະນັກງານວິຊາການ ຈຳນວນໜຶ່ງ ຂອງອົງການໄອຍະການທະຫານ ເປັນຜູ້ຊ່ວຍວຽກ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະເມີນຜົນງານ**

ຄະນະກຳມະການປະເມີນຜົນງານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າອອກນິຕິກຳ ກ່ຽວກັບການປະເມີນຜົນງານ;
2. ປະເມີນຜົນງານ ຂອງພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ;
3. ຕົກລົງກ່ຽວກັບການປະເມີນຜົນງານ ຫຼື ລາຍງານຜົນການປະເມີນຜົນງານ ຂອງພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ຂັ້ນທ້ອງຖິ່ນ ຕໍ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ ເພື່ອພິຈາລະນາຕົກລົງ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ຫົວໜ້າອົງການໄອຍະການທະຫານຂັ້ນສູງ.

**ມາດຕາ 59 ການດຳເນີນການປະເມີນຜົນງານ**

ການປະເມີນຜົນງານ ຂອງພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໃຫ້ດຳເນີນຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ຕາມລະບຽບການທີ່ກ່ຽວຂ້ອງ. ສຳລັບການຍ້ອງຍໍ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ໃຫ້ຖືເອົາການຍ້ອງຍໍປະຈຳປີ ຂອງອົງການໄອຍະການປະຊາຊົນ ທີ່ກ່ຽວຂ້ອງ.

## ພາກທີ X
## ການໂຈະການປະຕິບັດໜ້າທີ່, ການຟື້ນຟູສິດ ແລະ ການສິ້ນສຸດ ຂອງພະນັກງານໄອຍະການ

**ມາດຕາ 60 ການໂຈະການປະຕິບັດໜ້າທີ່ຂອງພະນັກງານໄອຍະການ**

ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ຈະຖືກໂຈະການປະຕິບັດໜ້າທີ່ຊົ່ວຄາວ ໃນກໍລະນີຜູ້ກ່ຽວຖືກດຳເນີນຄະດີອາຍາ ຈົນກວ່າຈະມີຄຳຕົກລົງວ່າ ຜູ້ກ່ຽວເປັນຜູ້ບໍລິສຸດ.

**ມາດຕາ 61 ການຟື້ນຟູສິດຂອງພະນັກງານໄອຍະການ**

ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ຈະໄດ້ຮັບການຟື້ນຟູສິດ ກ່ຽວກັບ ກຽດສັກສີ, ຕຳແໜ່ງ, ຊັບສິນ ແລະ ສຸຂະພາບຂອງຕົນ ຕາມກົດໝາຍ.

ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ທີ່ຖືກໂຈະການປະຕິບັດໜ້າທີ່ຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ຈະໄດ້ຮັບການຟື້ນຟູສິດ ໃນກໍລະນີຜູ້ກ່ຽວຫາກເປັນຜູ້ບໍລິສຸດ.

**ມາດຕາ 62 ການສິ້ນສຸດການເປັນພະນັກງານໄອຍະການ**

ການເປັນ ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ ສິ້ນສຸດໃນກໍລະນີ ດັ່ງນີ້:

1. ຖືກປົດຈາກການເປັນພະນັກງານໄອຍະການ ຫຼື ຜູ້ຊ່ວຍພະນັກງານໄອຍະການ;
2. ຖືກໄລ່ອອກ ຫຼື ຂໍລາອອກ ຈາກການ ເປັນ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ຫຼື ພະນັກງານ ອົງການໄອຍະການທະຫານ;
3. ໄດ້ຮັບນະໂຍບາຍອຸດໜູນບຳນານ;
4. ຍົກຍ້າຍໄປຮັບໜ້າທີ່ຢູ່ຂະແໜງການອື່ນ;
5. ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
6. ເສຍຊີວິດ.

## ພາກທີ XI
## ຕາປະທັບ, ເຄື່ອງແບບ, ກາໝາຍ ແລະ ບັດ ຂອງພະນັກງານໄອຍະການ

**ມາດຕາ 63 ຕາປະທັບ**

ພະນັກງານໄອຍະການ ມີຕາປະທັບຂອງຕົນ ຕາມການຕົກລົງ ຂອງລັດຖະບານ.

**ມາດຕາ 64 ເຄື່ອງແບບ, ກາໝາຍ ແລະ ບັດ ຂອງພະນັກງານໄອຍະການ**

ເຄື່ອງແບບ, ກາໝາຍ ແລະ ບັດ ຂອງພະນັກງານໄອຍະການປະຊາຊົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ.

ສຳລັບ ກາໝາຍ ແລະ ບັດ ຂອງພະນັກງານໄອຍະການທະຫານ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 65 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 66 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 67 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສປປ ລາວ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການໄອຍະການທະຫານຂັ້ນສູງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 68 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ກັນຍາ 2025 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**